ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********* **********

ກົມປ່າໄມ້

ພະແນກພັດທະນາມາດຖານເຕັກນິກປ່າໄມ້

ເລກທີ 121 /ພຖປມ

ນະຄອນຫຼວງວຽງຈັນ, ວັນທີ : 01 AUG 2016

ຮຽນ: ທ່ານ ຫົວໜ້າ ກົມປ່າໄມ້

ເລື່ອງ: ການປະຊຸມປຶກສາຫາລື ກ່ຽວກັບ ການກຳນົດ ຫຼັກການ, ມາດຖານ, ຕົວຊີ້ວັດ ແລະ ຕົວຢັ້ງຢືນໄມ້ ທີ່ຖືກຕ້ອງ ຕາມກົດໝາຍ ຂອງໄມ້ປ່າຜະລິດ ແຕ່ສະໜາມ 1-2-3

ໃນລະຫວ່າງ ວັນທີ 18-20 ກໍລະກົດ 2016, ພະແນກພັດທະນາມາດຖານເຕັກນິກປ່າໄມ້, ໃນນາມຜູ້ຮັບຜິດຊອບ ກຸ່ມຊ່ຽວຊານ ສະເພາະດ້ານ ໄມ້ປ່າຜະລິດ ສະໜາມ 1-2-3 ຂອງໂຄງການ Pro FLEGT-GIZ ໄດ້ຈັດກອງປະຊຸມຂຶ້ນ ຢູ່ທີ່ຫ້ອງປະຊຸມ ສູນຝຶກອົບຮົມປ່າໄມ້ ບ້ານ ສີວິໄລ, ເມືອງ ຫີນເຫີບ, ແຂວງ ວຽງຈັນ ໂດຍແມ່ນ ທ່ານ ດຣ ອຸປະກອນ ອາລຸນສະຫວັດ ຫົວໜ້າ ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ເປັນຜູ້ຊີ້ນຳກອງປະຊຸມ. ກອງປະຊຸມດັ່ງກ່າວນີ້ ໄດ້ເຊື້ອເຊີນ ເອົາຜູ້ຕາງໜ້າ ຫຼື ວິຊາການ ຈາກຫຼາຍພາກສ່ວນ ເຂົ້າຮ່ວມຄື: ຂະແໜງປ່າໄມ້ແຂວງຄຳມ່ວນ 2 ທ່ານ, ກົມກວດກາປ່າໄມ້ 2 ທ່ານ, ໂຄງການ WWF 1 ທ່ານ, ຫ້ອງການກອງທຶນພັດທະນາ ແລະ ຊັບພະຍາກອນປ່າໄມ້ 1 ທ່ານ, ສູນຝຶກອົບຮົມປ່າໄມ້ 1 ທ່ານ, ພະແນກຄຸ້ມຄອງປ່າຜະລິດ ແລະ ການການຂຸດຄົ້ນໄມ້ 1 ທ່ານ, ພະແນກສົ່ງເສີມປູກໄມ້ ແລະ ການລົງທຶນປ່າໄມ້ 1 ທ່ານ, ພະແນກພັດທະນາມາດຖານເຕັກນິກປ່າໄມ້ 5 ທ່ານ, ກົມເສດຖະກິດ ສະພາແຫ່ງຊາດ 1 ທ່ານ ພ້ອມດ້ວຍ ຊ່ຽວຊານໂຄງການ FLEGT-VPA 3 ທ່ານ ເຂົ້າຮ່ວມ ຊຶ່ງລວມມີຜູ້ເຂົ້າຮ່ວມທັງໝົດ 18 ທ່ານ. ການຈັດກອງປະຊຸມຄັ້ງນີ້ ມີຈຸດປະສົງ ເພື່ອ ປຶກສາຫາລື ແລະ ປັບປຸງຄືນ ຫຼັກການ, ມາດຖານ, ຕົວຊີ້ວັດ ແລະ ຕົວຢັ້ງຢືນ ໄມ້ທີ່ຖືກຕ້ອງຕາມກົດໝາຍ ຂອງໄມ້ປ່າຜະລິດແຕ່ສະໜາມ 1-2-3 ທີ່ໄດ້ຮ່າງໄວ້ເປັນສະບັບທີ 1 ໃນກອງປະຊຸມ ທີ່ຜ່ານມາ, ເພື່ອແນໃສ່ ການຮ່າງນິຍາມ ໄມ້ທີ່ຖືກຕ້ອງ ໃຫ້ສຳເລັດ ເປັນຮ່າງສະບັບທີ 2 ຊຶ່ງຈະໄດ້ ນຳໄປສະເໜີ ຕໍ່ກອງປະຊຸມລາຍງານ ຄວາມຄືບໜ້າ ຂອງໂຄງການ Pro-FLEGT ຊຶ່ງຈະຈັດຂຶ້ນ ໃນວັນທີ 26 ກໍລະກົດ 2016 ແລະ ແຂວງເປົ້າໝາຍ ທົດລອງ ຂອງໂຄງການ Pro-FLEGT ຄື: ແຂວງ ຄຳມ່ວນ ເພື່ອຄວາມເປັນເອກະພາບ ໃນກາງເດືອນ ສິງຫາ (8) 2016 ນີ້.

ພາຍຫຼັງ ທ່ານຜູ້ຊີ້ນຳກອງປະຊຸມ ໄດ້ໃຫ້ທິດຊີ້ນຳ ແລະ ລາຍງານ ຄວາມຄືບໜ້າ ຂອງການສ້າງຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ຂອງປ່າຜະລິດ ແຕ່ສະໜາມ 1-2-3 ທີ່ໄດ້ປະຕິບັດ ຜ່ານມາ ໃຫ້ກອງປະຊຸມຮັບຊາບເພື່ອເປັນທິດທາງ ໃນການປຶກສາຫາລື ແລະ ປະກອບຄຳເຫັນ ໃສ່ຮ່າງນິຍາມ ໄມ້ທີ່ຖືກຕ້ອງຕາມກົດໝາຍ ຂອງໄມ້ປ່າຜະລິດ ແຕ່ສະໜາມ 1-2-3 ແລະ ກ່າວເປີດກອງປະຊຸມ ຢ່າງເປັນທາງການແລ້ວ ກອງປະຊຸມໄດ້ດຳເນີນຕາມວາລະ ດັ່ງນີ້:

- ທ່ານ HEI KO ໄດ້ສະເໜີ ແລະ ໃຫ້ຄຳຄິດເຫັນ ຕໍ່ກັບຫຼັກການລວມ ໃນການໃຫ້ນິຍາມໄມ້ ທີ່ຖືກຕ້ອງຕາມກົດໝາຍ ຂອງໄມ້ປ່າຜະລິດແຕ່ສະໜາມ 1-2-3 (TLD).
- ທ່ານ ເກົ້ ໄດ້ສະເໜີ ນິຍາມໄມ້ ທີ່ຖືກຕ້ອງ ຕາມກົດໝາຍ ຂອງ EU ແລະ ອະທິບາຍ ແບບຟອມ ຕໍ່ກອງປະຊຸມ ເພື່ອ ເປັນບ່ອນອີງ ໃນການສ້າງ ແລະ ປັບປຸງ ຮ່າງນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ ຂອງໄມ້ປ່າຜະລິດ ແຕ່ສະໜາມ 1-2-3 ຢູ່ໃນ ສ ປ ປລາວ. ຈາກນັ້ນ ທ່ານ ຄຳເພືອ ສີຣີວົງ ສະເໜີ ຮ່າງນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ ຂອງໄມ້ປ່າຜະລິດ ແຕ່ສະໜາມ 1-2-3 ຢູ່ໃນ ສ ປ ປ ລາວ ຕໍ່ທີ່ປະຊຸມ ເພື່ອໃຫ້ແຕ່ທ່ານ ໄດ້ຄົ້ນຄ້ວາ ປຶກສາຫາລື ແລກປ່ຽນ ຄຳຄິດ ຄຳເຫັນ ແລະ ເປັນເອກະພາບ ຕໍ່ກັບແບບຟອມຂອງຫຼັກການ ໂດຍ ເນັ້ນໃສ່ບາດກ້າວ ໃນການ ສ້າງຫຼັກການ, ມາດຖານ, ຕົວຊີ້ວັດ ແລະ ຕົວຢັ້ງຢືນ ໃຫ້ແທດເໝາະ ກັບສະພາບຄວາມເປັນຈິງ.

ຜ່ານການຄົ້ນຄວ້າ ປຶກສາຫາລື ແລກປ່ຽນ ຄຳຄິດ ຄຳເຫັນ ຢ່າງກົງໄປ ກົງມາ ຕໍ່ຮ່າງນິຍາມ ໄມ້ທີ່ຖືກຕ້ອງຕາມກົດໝາຍ ຂອງໄມ້ປ່າຜະລິດ ແຕ່ສະໜາມ 1-2-3 ເຫັນວ່າ ຫຼັກການ, ມາດຖານ, ຕົວຊີ້ວັດ ແລະ ຕົວຢັ້ງຢືນໄດ້ມີການດັດປັບຄືດັ່ງນີ້:

1. ສຳລັບຫົວຂໍ້ ຂອງຮ່າງນິຍາມໄມ້ ທີ່ຖືກຕ້ອງຕາມກົດໝາຍ ແມ່ນເຫັນດີ ເອົາຕາມແບບເກົ່າ ( ເລີ່ມແຕ່ຈຸດຕັດປ້ຳ ຫຼື ສະໜາມ 1-2-3 ).
2. ສຳລັບ ຄຳສັບ ຢູ່ໃນຮ່າງນິຍາມ ແມ່ນໃຫ້ໃຊ້ຄຳສັບ (ນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ) ປ່ຽນຈາກ ນິຍາມ ຄວາມຖືກຕ້ອງ ຂອງໄມ້ ຕາມກົດໝາຍ.
3. ຮ່າງນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ ສະບັບທີ 1 ໃນກອງປະຊຸມທີ່ຜ່ານມາ ມີ 8 ຫຼັກການ, ແຕ່ກອງປະຊຸມຄັ້ງນີ້ ໄດ້ຕົກລົງເຫັນດີ ຫຍໍ້ລົງມາອີກ ເປັນ 6 ຫຼັກການ, 9 ມາດຖານ, 11 ຕົວຊີ້ວັດ ຍ້ອນວ່າ ຫຼັກການ ທີ 1 ທີ 2 ເອົາເຂົ້າກັນ ເປັນໜຶ່ງຫຼັກການ ແລະ ຫຼັກການທີ 7 ທີ 8 ເອົາເຂົ້າກັນ ເປັນໜຶ່ງຫຼັກການ ແລະ ມອບໃຫ້ ພະແນກພັດທະນາມາດຖານເຕັກນິກປ່າໄມ້, ກົມປ່າໄມ້ ໃນນາມຜູ້ຮັບຜິດຊອບກຸ່ມຊ່ຽວຊານ ສະເພາະດ້ານສົມທົບກັບ ທາງໂຄງການ ລຽບລຽງຄືນ ແລະ ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງເພື່ອ ກວດເບິ່ງຄືນ ບ່ອນໃດຍັງບໍ່ຄົບຖ້ວນ, ບ່ອນໃດເກີນ ແມ່ນມອບໃຫ້ແຕ່ລະພາກສ່ວນ ປະກອບຕື່ມເພື່ອ ໃຫ້ເນື້ອໃນ ຮ່າງນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ ຂອງປ່າຜະລິດ ແຕ່ສະໜາມ 1-2-3 ສົມບູນແບບ ແລະ ຄົບຖ້ວນ.
4. ສຳລັບ ຮ່າງນິຍາມ ໄມ້ທີ່ຖືກຕ້ອງ ຕາມກົດໝາຍ ຂອງປ່າຜະລິດ ແຕ່ສະໜາມ 1-2-3 ທີ່ຈະເອົາໄປປ້ອງກັນ ຢູ່ກອງປະຊຸມ ໃນວັນທີ 26 ກໍລະກົດ 2016 ນີ້ ແມ່ນເຫັນດີເອົາຕາມນີ້ກ່ອນ, ຫຼັງຈາກໄປສະເໜີແລ້ວ, ກອງປະຊຸມ ມີຄຳເຫັນແນວໃດ ຈຶ່ງມາປັບປຸງຄືນ ເພື່ອນຳໄປສືບຕໍ່ ຢູ່ແຂວງເປົ້າໝາຍທົດລອງຂອງໂຄງການ Pro-FLEGT (ແຂວງ ຄຳມ່ວນ).

ດັ່ງນັ້ນ, ຈຶ່ງລາຍງານໃຫ້ທ່ານຊາບ ແລະ ໃຫ້ທິດຊີ້ນຳໃນຕໍ່ໜ້າດ້ວຍ.

ຮ/ກ ຫົວໜ້າ ພະແນກພັດທະນາມາດຖານເຕັກນິກປ່າໄມ້

Phas

**ພິມມາ ປະທຸມມະວົງ**